ວັນທີ 9 ພຶດສະພາ 2023

**ສື່ມວນຊົນເຜີຍແຜ່**

**ກິດຈະກໍາ ຂອງເດືອນ ມໍລະດົກອາຊີ ຂອງສູນວັດທະນະທໍາຈີນ ແຫ່ງມະຫານະຄອນ ໂຕຣອນໂຕ**

ວັນທີ 10 ພຶດສະພາ 2023, ສູນວັດທະນະທໍາຈີນແຫ່ງມະຫານະຄອນໂຕຣອນໂຕ CCCGT) ໄດ້ເປັນກຽດ ເປີດໂຄງການ ເດືອນມໍລະດົກ ອາຊີ ໂດຍໄດ້ຮັບທືນຈາກ ກະຊວງສຶກສາທິການ ຂອງແຂວງ ອອນເທຣີໂອ.

ຈຸດປະສົງຂອງໂຄງການນີ້ແມ່ນ ເພື່ອຮັບຮູ້ ແລະ ສະທ້ອນ ເຖິງການປະກອບສ່ວນຫຼາຍຢ່າງ ທີ່ຄົນຕົ້ນກໍາເນີດ ຂອງອາຊີ ໄດ້ຮ່ວມສ້າງ ແລະ ຍັງສືບຕໍ່ສ້າງໃຫ້ແກ່ ປະເທດການາດາ, ເພື່ອສ້າງຊັບພະຍາກອນການສຶກສາແບບໃຫມ່  ໂດຍການຫມູນໃຊ້ ອຸປະກອນ ແລະ ເຄື່ອງມືທາງດ້ານດິຈິຕອລ ແລະ ອອນໄລນ໌ ເພື່ອຊ່ວຍ ໃນການຮຽນຮູ້, ຄວາມເຂົ້າໃຈກ່ຽວກັບ ເດືອນມໍລະດົກ ຂອງອາຊີ, ແລະກົດຫມາຍວ່າດ້ວຍການຍົກເວັ້ນຄົນຈີນ ໃນແຂວງ ອອນເທຣີໂອ. ງານວາງສະແດງ ແລະ ແລກປ່ຽນ ວັດທະນະທໍາ ອາຊີ ພິເສດ ຈະໄດ້ມີການວາງແຜນ ແລະ ນໍາສະເໜີ ໃນເດືອນມໍລະດົກອາຊີ 2023, ໂດຍຈະມີບັນດາຜູ້ຮ່ວມມືຈາກ ອົງການປະຊາຄົມວັດທະນະທໍາ ອື່ນໆອີກ.

**ໂຄງການ ກິດຈະກໍາ**

ກິດຈະກໍາທີ 1: ການສ້າງ ແລະ ການຜະລິດ ຊັບພະຍາກອນການສຶກສາ ທາງດິຈິຕອລ ແລະ ອອນໄລນ໌

ສູນວັດທະນະທໍາຈີນ ແຫ່ງມະຫານະຄອນ ໂຕຣອນໂຕ (CCCGT) ຈະສ້າງ ແລະ ຜະລິດຊັບພະຍາກອນແຫຼ່ງຂໍ້ມູນ ແລະ ອຸປະກອນການ ສຶກສາ ທາງດ້ານດິຈິຕອລ ແລະ ອອນໄລນ໌ ເພື່ອຊ່ວຍໃນການຮຽນຮູ້ ຂອງເດືອນມໍລະດົກອາຊີ ໃນແຂວງ ອອນເທຣີໂອ.  ຊັບພະຍາກອນການສຶກສາ ຈະສອດຄ່ອງກັບຫຼັກສູດຈາກຊັ້ນ ປໍ 1 ຫາ ປໍ 12 ແລະຈະສາມາດໃຊ້ໄດ້ ຢ່າງໜ້ອຍ ສອງປີ ຢູ່ໃນເວັບໄຊທ໌ຂອງ ສູນວັດທະນະທໍາຈີນ ແຫ່ງມະຫານະຄອນ ໂຕຣອນໂຕ (CCCGT).

ຊັບພະຍາກອນການສຶກສາ ຈະປະກອບມີ ວິດີໂອເລົ່າເລື່ອງ, ໂປສເຕີປະຈໍາເດືອນມໍລະດົກອາຊີ ທີ່ສາມາດພິມໄດ້ ແລະ ແຕ້ມສີໄດ້, ເອກະສານຍ່ອຍ, ເອກະສານຄໍາຖາມແລະຄໍາຕອບ, ແລະ ວິດີໂອ ຫັດຖະກໍາ.

ຊັບພະຍາກອນການສຶກສາ ຍັງຈະຊ່ວຍ ໃຫ້ນັກສຶກສາ ແລະ ຄູອາຈານ ໃຊ້ໃນການຄິດເລິກເຊິ່ງ ກ່ຽວກັບການລະນຶກເຖິງ ກົດໝາຍ ວ່າດ້ວຍການຍົກເວັ້ນຄົນຈີນ.  ສູນວັດທະນະທໍາຈີນ ແຫ່ງມະຫານະຄອນ ໂຕຣອນໂຕ CCCGT ຈະແຈກຢາຍ ຊັບພະຍາກອນ ການສຶກສາ ທີ່ສ້າງຂື້ນ ໄປໃຫ້ກັບເຄືອຂ່າຍ ອົງການຕ່າງໆ ທີ່ມີຢູ່ແລ້ວ, ລວມທັງ ໂຮງຮຽນ ໃນເຂດທ້ອງຖິ່ນ.

ກິດຈະກໍາທີ 2: ງານຕະຫຼາດນັດ ແລກປ່ຽນວັດທະນະທໍາອາຊີ

ສູນວັດທະນະທໍາຈີນ ແຫ່ງມະຫານະຄອນ ໂຕຣອນໂຕ (CCCGT) ຈະຈັດງານ ວາງສະແດງ ແລະ ແບ່ງປັນວັດທະນະທໍາ ອາຊີ ໃນ ວັນທີ 28 ພຶດສະພາ 2023 ຢູ່ສະໜາມຫຼວງ Yonge-Dundas Square, ແຕ່ເວລາ 12:00 ໂມງຫາ 18:00 ໂມງ.  ໃນມື້ນັ້ນ ຈະມີການຖ່າຍທອດສົດ ທາງອອນໄລນ໌ ຊຶ່ງສາມາດເບິ່ງໄດ້ຢູ່ ຫ້ອງຮຽນທົ່ວແຂວງ. ເນື້ອໃນ ຈະສອດຄ່ອງ ກັບຫຼັກສູດສຶກສາ, ແລະ ປະກອບມີ ເຄື່ອງນຸ່ງອາຊີ, ຫັດຖະກໍາ, ສິລະປະ, ດົນຕີ, ການຟ້ອນລໍາ, ແລະ ການສະແດງອາຫານ ຂອງອາຊີ.

ກິດຈະກຳທີ 3: ເວທີສົນທະນາກ່ຽວກັບ ການທົບທວນຄືນ ຂອງກົດໝາຍວ່າດ້ວຍການຍົກເວັ້ນຄົນຈີນ.

ສູນວັດທະນະທຳຈີນ ແຫ່ງມະຫານະຄອນ ໂຕຣອນໂຕ (CCCGT) ຈະຈັດເວທີສົນທະນາອອນໄລນ໌ສຳລັບນັກຮຽນ, ຄູສອນ, ນັກປະຫວັດສາດ, ແລະສະມາຊິກຊຸມຊົນ ເພື່ອປຶກສາຫາລື ແລະ ສະທ້ອນ ໃຫ້ເຫັນເຖິງຜົນກະທົບ ແກ່ ປະເທດການາດາ ຂອງກົດໝາຍຄົນເຂົ້າເມືອງຂອງຄົນຈີນ 1923 (ກົດໝາຍວ່າດ້ວຍການຍົກເວັ້ນຄົນຈີນ) ແລະ ວິທີການຮຽນຮູ້ຈາກປະຫວັດສາດນີ້. ບົດບັນທຶກ ຂອງເວທີສົນທະນາ ແລະ ວິດີໂອຈະຖືກນຳໄປໃສ່ໄວ້ ອອນໄລນ໌ ໃຫ້ຄູອາຈານ ເພື່ອທີ່ຈະນຳໃຊ້ໃນຫ້ອງຮຽນ, ແລະບົດສະຫຼຸບຂອງເວທີສົນທະນາ ຈະໄດ້ຮັບການຜະລິດເປັນ ຊັບພະຍາກອນການສອນ.

ເວັບໄຊຂອງ ເດືອນນໍລະດິກອາຊີ ນີ້ຈະຖືກເກັບໄວ້ໃນເວັບໄຊ ຂອງສູນວັດທະນະທຳຈີນ ແຫ່ງມະຫານະຄອນ ໂຕຣອນໂຕ ເປັນເວລາສອງປີ. ເວັບໄຊນີ້ ຈະສືບຕໍ່ຂະຫຍາຍ ແລະ ປັບປຸງ ດ້ວຍເນື້ອໃນ ທີ່ກ່ຽວຂ້ອງໃນປະຈຸບັນ ເພື່ອໃຫ້ເປັນ ຊັບພະຍາກອນການສຶກສາ ສຳລັບນັກຮຽນແລະຄູອາຈານ.